ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
INEWS ຂ່າວ
ທະນາຄານແຫ່ງ ສປປ ລາວ ສາຂາພາກເໜືອ ແຂວງຊຽງຂວາງ
ຖະໜົນ ເມືອງພວນ, ບ້ານ ໂພນສະຫວ່າງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ທຫລ.ຊຂ ເຜີຍແຜ່ຂໍ້ຕົກລົງ ວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ



ໃນວັນທີ 20 ກຸມພາ 2020 ທະນາຄານແຫ່ງ ສປປ ລາວ ສາຂາ ພາກເໜືອ ແຂວງ ຊຽງຂວາງ (ທຫລ.ຊຂ) ໄດ້ຈັດກອງປະຊຸມເຜີຍແຜ່ຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ຂຶ້ນທີ່ຫ້ອງປະຊຸມ ທຫລ.ຊຂ ໂດຍການເປັນປະທານຂອງ ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທຫລ.ຊຂ, ມີບັນດາຜູ້ປະກອບການ ແລະ ຜູ້ຕາງໜ້າຜູ້ປະກອບການຈາກຮ້ານແລກປ່ຽນເງິນຕາຕ່າງປະເທດ ຈຳນວນ 13 ຮ້ານ ພາຍໃນແຂວງ ຊຽງຂວາງ ແລະ ພະນັກງານຈາກພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ເຂົ້າຮ່ວມ.

ໃນພິທີ ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທຫລ.ຊຂ ໄດ້ມີຄຳຄິດເຫັນ ກ່າວເປີດກອງປະຊຸມຢ່າງເປັນທາງການ ເຊິ່ງຈຸດປະສົງໃນການຈັດກອງປະຊຸມເຜີຍແຜ່ໃນຄັ້ງນີ້ ກໍ່ເພື່ອແນໃສ່ສ້າງຄວາມເຂົ້າໃຈອັນເລິກເຊິ່ງໃນຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ, ລະບຽບ-ຫຼັກການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ ແລະ ການກວດກາການເຄື່ອນໄຫວວຽກງານທຸລະກິດຮ້ານແລກປ່ຽນເງິນຕາ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ.

ຫຼັງຈາກນັ້ນ, ທ່ານ ວຽງວິໄລ ສຸດທິຈັກ ຫົວໜ້າພະແນກເສດຖະກິດ-ເງິນຕາ ແລະ ຄຸ້ມຄອງເງິນຕາຕ່າງປະເທດ ທຫລ.ຊຂ ໄດ້ຂຶ້ນບັນຍາຍຂໍ້ຕົກລົງວ່າດ້ວຍການດຳເນີນທຸລະກິດແລກປ່ຽນເງິນຕາ ສະບັບ ເລກທີ 529/ທຫລ, ລົງວັນທີ 01 ກໍລະກົດ 2016 ເຊິ່ງປະກອບມີ 06 ໝວດ ແລະ 23 ມາດຕາ.

ໃນນັ້ນ, ກອງປະຊຸມເຜີຍແຜ່ໄດ້ເນັ້ນໜັກ ແລະ ສ້າງຄວາມເຂົ້າເລິກເຊິ່ງໃນບາງມາດຕາຂອງຂໍ້ຕົກລົງ ໂດຍສະເພາະ ມາດຖານ ແລະ ເງື່ອນໄຂການອະນຸຍາດສ້າງຕັ້ງຮ້ານແລກປ່ຽນເງິນຕາ, ຄ່າທໍານຽມ, ການໂຈະ-ການຖອນໃບອະນຸຍາດດໍາເນີນທຸລະກິດ, ສິດ ແລະ ໜ້າທີ່ຂອງຜູ້ດໍາເນີນທຸລະກິດຮ້ານແລກປ່ຽນເງິນຕາ, ຂໍ້ຫ້າມ ແລະ ມາດຕະການປັບໄໝຕໍ່ຜູ້ລະເມີດ ພ້ອມດຽວກັນນັ້ນກໍ່ໄດ້ສະເໜີວິທີການຄິດໄລ່ການກໍານົດອັດຕາແລກປ່ຽນໃນແຕ່ລະວັນ ເຊິ່ງອີງໃສ່ອັດຕາອ້າງອີງທີ່ ທະນາຄານແຫ່ງ ສປປ ລາວ ກໍານົດອອກໃນແຕ່ລະວັນ ໂດຍສະເພາະການກໍານົດອັດຕາແລກປ່ຽນອ້າງອີງ ± 0,25 ແລະ ປະກອບການຊື້-ຂາຍເກັງກໍາໄລ 0,5% (ສະກຸນເງິນໂດລາ), 0,75% (ສະກຸນເງິນບາດ) ແລະ 2% ສໍາລັບສະກຸນເງິນອື່ນ. ຈາກນັ້ນ, ບັນດານັກສໍາມະນາກອນໄດ້ພ້ອມກັນແລກປ່ຽນບົດຮຽນ ແລະ ມີຄໍາຄິດຄໍາເຫັນຢ່າງກົງໄປກົງມາ.





ໃນຕອນທ້າຍ ທ່ານປະທານກອງປະຊຸມ ຍັງໄດ້ເນັ້ນໜັກ, ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມຈົ່ງເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ ໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງວ່າດ້ວຍການດໍາເນີນທຸລະກິດແລກປ່ຽນເງິນຕາ, ຮຽກຮ້ອງໃຫ້ບັນດາຜູ້ປະກອບການນໍາເອົາເນື້ອໃນຈິດໃຈ ຂອງຂໍ້ຕົກລົງດັ່ງກ່າວໄປຈັດຕັ້ງປະຕິບັດໃຫ້ເຂັ້ມງວດ ເພື່ອປະກອບສ່ວນເຂົ້າໃນການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ມີປະສິດທິຜົນ.

✍ພາບ + ຂ່າວ: ສຸກສະຫວັນ ພົມມະວົງ